# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ

# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 9

## ທັກສະການຄົ້ນຄ້ວາຄຳຮ້ອງ ແລະ ການແນະນຳຄູ່ກໍລະນີ ໃນການຕັດສິນ

## Application research skills and the guidance for both parties

### 1. ທັກສະການຄົ້ນຄວ້າຄຳຮ້ອງຂໍຂອງຄູ່ກໍລະນີ

#### 1.1 ການຄົ້ນຄວ້າຄຳຮ້ອງຂໍ

ການຄົ້ນຄວ້າສຳນວນເອກະສານຄຳຮ້ອງຂໍ ຖືເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍພ້ອມດ້ວຍເອກະສານທີ່ປະກອບແລ້ວ ພະແນກສັງລວມ ແລະ ຄຸ້ມຄອງຂໍ້ມູນຂ່າສານ ຂອງສູນ ຫຼື ໜ່ວຍງານສັງລວມ ແລະ ຄຸ້ມຄອງຂໍ້ມູນຂ່າສານ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ນອກຈາກຈະກວດກາຄຳຮ້ອງຂໍ ແລະ ເອກະສານປະກອບໃນເບື້ອງຕົ້ນແລ້ວ ມີໜ້າທີ່ປະກອບເປັນສຳນວນຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອນຳສະເໜີຕໍ່ຫົວໜ້າສູນ ຫຼື ຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາດັ່ງນີ້:

ມອບສຳນວນຄຳຮ້ອງຂໍໃຫ້ ພະແນກ ຫຼື ໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອຄົ້ນຄວ້າເບື້ອງຕົ້ນແລ້ວລາຍງານຜົນຂອງການຄົ້ນຄວ້າຕໍ່ຫົວໜ້າສູນ ຫຼື ຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງພະແນກ ຫຼື ໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງຄົ້ນຄວ້າເນື້ອໃນ ແລະ ເອກະສານຄັດຕິດ ຄຳຮ້ອງຂໍແກ້
ໄຂຂໍ້ຂັດແຍ່ງຂອງສະບັບດັ່ງກ່າວວ່າມີເນື້ອໃນທີ່ຄົບຖ້ວນແລ້ວຫຼືບໍ່ ຊຶ່ງເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ບ່ອນຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
- ບັນຫາທີ່ເກີດຂໍ້ຂັດແຍ່ງ;
- ມູນຄ່າຂອງຂໍ້ຂັດແຍ່ງ;
- ຂໍ້ສະເໜີຂອງຄູ່ກໍລະນີ.

ພາຍຫຼັງຄົ້ນຄວ້າລາຍງານສໍາເລັດແລ້ວ ພະແນກ ຫຼື ໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເຊີນຄູ່ກໍລະນີອີກຝ່າຍໜຶ່ງເຂົ້າມາຮັບຊາບຕໍ່ຄໍາຮ້ອງຂໍ ແລະ ຄໍາແກ້ຄໍາຮ້ອງຂໍ ພ້ອມທັງປຶກສາຫາລືຕົກລົງກ່ຽວກັບຮູບການແກ້ໄຂ. ຖ້າຄູ່ກໍລະນີອີກຝ່າຍໜຶ່ງຫາກບໍ່ມາຕາມໝາຍເຊີນ, ຄໍາຮ້ອງຂໍດັ່ງ ກ່າວກໍຈະບໍ່ຖືກພິຈາລະນາ ແລະ ຈະສົ່ງຄໍາຮ້ອງຂໍຄືນໃຫ້ແກ່ຝ່າຍຮ້ອງຂໍ.

ໃນກໍລະນີທີ່ຄໍາຮ້ອງຂໍກ່ຽວກັບຂໍ້ຂັດແຍ່ງ ຫາກບໍ່ຖືກຕ້ອງຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍພ້ອມດ້ວຍເຫດຜົນພາຍໃນຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍເປັນຕົ້ນໄປ.

ການຄົ້ນຄ້ວາພິຈາລະນາຄໍາຮ້ອງຂໍ ຕ້ອງກວດກາເບິ່ງວ່າຄໍາຮ້ອງຂໍນັ້ນຖືກຕ້ອງສອດຄ່ອງຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ່ 51/ສພຊ, ລົງວັນທີ22 ມິຖຸນາ 2018 ຫຼື ບໍ່? ຖ້າຫາກວ່າຖືກຕ້ອງແລ້ວ ກໍສາມາດຮັບມາພິຈາລະນາ, ແຕ່ຖ້າຫາກວ່າບໍ່ຖືກຕ້ອງກໍບໍ່ສາມາດຮັບມາພິຈາລະນາໄດ້. ການຮັບເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດມາພິຈາລະນາຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເປັນຂໍ້ຂັດແຍ່ງທີ່ເກີດຈາກການລະເມີດສັນຍາທາງດ້ານເສດຖະກິດ ຫຼື ການດໍາເນີນທຸລະກິດ ແລະ ຕ້ອງມີເງື່ອນໄຂ ດັ່ງນີ້:

1) ແມ່ນຂໍ້ຂັດແຍ່ງທີ່ຄູ່ກໍລະນີ ໄດ້ຕົກລົງກັນໄວ້ໃນສັນຍາ ຫຼື ໄດ້ສະໝັກໃຈໃຫ້ແກ້ໄຂ ໝາຍຄວາມວ່າ: ຂໍ້ຂັດແຍ່ງນັ້ນຄູ່ກໍລະນີໄດ້ຕົກລົງກັນກ່ຽວກັບບັນຫາການແກ້ໄຂຂໍ້ຂັດແຍ່ງໂດຍສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄວ້ໃນສັນຍາທີ່ຄູ່ກໍລະນີທັງສອງຝ່າຍໄດ້ສ້າງຂຶ້ນ ຫຼື ໃນເວລາມີຂໍ້ຂັດແຍ່ງເກີດຂຶ້ນຈາກການປະຕິບັດສັນຍາທາງດ້ານເສດຖະກິດ ຫຼື ການດໍາເນີນທຸລະກິດ ແລ້ວຄູ່ກໍລະນີໄດ້ສະໝັກໃຈໃຫ້ແກ້ໄຂຂໍ້ຂັດແຍ່ງ ເຖິງວ່າຄູ່ກໍລະນີຈະບໍ່ໄດ້ກໍານົດກ່ຽວກັບການແກ້ໄຂຂໍ້ຂັດແຍ່ງໄວ້ໃນສັນຍາເບື້ອງຕົ້ນກໍຕາມ. ໃນພາກປະຕິ ບັດຕົວຈິງແລ້ວສະແດງອອກດັ່ງນີ້: ພາຍຫຼັງທີ່ມີຂໍ້ຂັດແຍ່ງເກີດຂຶ້ນຄູ່ກໍລະນີທັງສອງຝ່າຍໄດ້ເປັນເອກະພາບຕົກລົງກັນເປັນລາຍລັກອັກສອນກ່ຽວກັບການແກ້ໄຂຂໍ້ຂັດແຍ່ງແລ້ວ ຍື່ນເຂົ້າມາຍັງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງ ເພື່ອດໍາເນີນຕາມຂັ້ນຕອນການດໍາເນີນການແກ້ໄຂ ຫຼື ຝ່າຍຮ້ອງຂໍຢື່ນຄໍາຮ້ອງມາຍັງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂ ແລະ ຝ່າຍຖືກຮ້ອງຂໍ ກໍຍື່ນຄໍາແກ້ຄໍາຮ້ອງຂໍມາຍັງສູນ ຫຼື ຫ້ອງ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອໃຫ້ພິຈາລະນາແກ້ໄຂ.

    **ຕົວຢ່າງ:** ຄູ່ກໍລະນີ ໄດ້ກໍານົດໄວ້ໃນສັນຍາ

    **ຕົວຢ່າງ:** ຄູ່ກໍລະນີ ບໍ່ໄດ້ກໍານົດໄວ້ໃນສັນຍາ

2) ບໍ່ແມ່ນຂໍ້ຂັດແຍ່ງທີ່ສານປະຊາຊົນພວມດໍາເນີນການແກ້ໄຂຢູ່ ຫຼື ມີຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໝາຍຄວາມວ່າ ຂໍ້ຂັດແຍ່ງດັ່ງກ່າວນັ້ນ ສານປະຊາຊົນພວມດໍາເນີນການແກ້ໄຂ ຫຼື ມີຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ. ໃນທາງປະຕິບັດຕົວຈິງທາງພະແນກ ຫຼື ໜ່ວຍງານຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດ ຖະກິດ ຕ້ອງກວດກາເບິ່ງສໍານວນເອກະສານຄໍາຮ້ອງຂໍແກ້ໄຂຂໍ້ຂັດແຍ່ງນັ້ນ ມີ

ເອກະສານໃດທີ່ສະແດງໃຫ້ເຫັນວ່າສານປະຊາຊົນພວມດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນ, ມີເລກທີ່ຂາເຂົ້າຂອງສານປະຊາຊົນ, ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ຫຼື ບໍ່? ຖ້າຫາກບໍ່ມີ ຂໍ້ຂັດແຍ່ງດັ່ງກ່າວສາມາດນຳມາພິຈາລະນາຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄດ້.

3) ບໍ່ແມ່ນຂໍ້ຂັດແຍ່ງທີ່ພົວພັນກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ. ໃນທາງປະຕິບັດຕົວຈິງທາງພະແນກ ຫຼື ໜ່ວຍງານຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງກວດກາເບິ່ງສຳນວນເອກະສານຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງນັ້ນ ຕ້ອງບໍ່ແມ່ນຂໍ້ຂັດແຍ່ງທີ່ລະເມີດລະບຽບກົດໝາຍກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ ໂດຍສະເພາະແມ່ນການກະທຳຜິດທາງອາຍາ ເຊັ່ນ:ການກະບົດ, ການທໍລະຍົດຕໍ່ຊາດ, ການເປັນນັກສືບສອດແນມ, ການທຳລາຍມ້າງເພ, ການປອມແປງເງິນ ຫຼື ການໃຊ້ເງິນປອມ, ການຟອກເງິນ, ການທຳຮ້າຍຮ່າງກາຍ, ການຫລິ້ນການພະນັນທີ່ບໍ່ໄດ້ຮັບອະນຸຍາດ, ການລັກຊັບສິນບັດ, ການຄ້າຢາເສບຕິດ, ການຂາຍອາວຸດເສິກ ໂດຍບໍ່ຖືກຕ້ອງຕາມກົດໝາຍ, ການຕັດໄມ້ທຳລາຍປ່າ, ການເຮັດໃຫ້ເກີດມົນລະພິດທາງອາກາດ, ທາງໜ້າດິນ, ໜ້ານໍ້າ ແລະ ອື່ນໆ ຖ້າຫາກບໍ່ແມ່ນຂໍ້ຂັດແຍ່ງນັ້ນ ແມ່ນສາມາດນຳມາພິຈາລະນາຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ສຳລັບຂໍ້ຂັດແຍ່ງທາງແພ່ງທົ່ວໄປ ເປັນຕົ້ນແມ່ນຂໍ້ຂັດແຍ່ງກ່ຽວກັບການສືບທອດມູນມໍຣະດົກ, ຂໍ້ຂັດແຍ່ງສາຍພົວພັນຄອບຄົວ, ຂໍ້ຂັດແຍ່ງການຂໍເອົາເດັກໄປເປັນລູກລ້ຽງ, ຂໍ້ຂັດແຍ່ງຮຽກຮ້ອງເອົາຄ່າລ້ຽງດູລູກ ແລະ ອື່ນໆ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນບໍ່ສາມາດນຳມາພິຈາລະນາໄດ້.

ສັງລວມແລ້ວການຄົ້ນຄ້ວາຄຳຮ້ອງຂໍ ແລະ ບັນດາເອກະສານທີ່ປະກອບໃນສຳນວນຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຕ້ອງເຮັດບົດລາຍງານການຄົ້ນຄວ້າຢ່າງເປັນລາຍລັກອັກສອນ ແລະ ຕ້ອງໃຫ້ສຳເລັດ ພາຍໃນຫ້າວັນລັດຖະການ, ພ້ອມທັງຮັບປະກັນຄວາມຖືກຕ້ອງສອດຄ່ອງກັບເງື່ອນໄຂການຮັບເອົາຂໍ້ຂັດແຍ່ງມາພິຈາລະນາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018.

### 1.2 ການຄົ້ນຄວ້າຄຳແກ້ຄຳຮ້ອງຂໍ

ການແກ້ຄຳຮ້ອງຂໍ ແມ່ນການນຳໃຊ້ສິດໃນການໂຕ້ແຍ່ງເປັນລາຍລັກອັກສອນຂອງຄູ່ກໍລະນີອີກຝ່າຍໜຶ່ງພາຍຫຼັງທີ່ໄດ້ເຂົ້າມາສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ການແກ້ຄຳຮ້ອງຂໍນັ້ນ ແມ່ນການຊີ້ໃຫ້ເຫັນວ່າຄູ່ກໍລະນີອີກຝ່າຍໜຶ່ງ ໄດ້ຮັບຮູ້ວ່າຕົນໄດ້ມີຂໍ້ຂັດແຍ່ງກ່ຽວກັບຜົນປະໂຫຍດທີ່ເກີດຈາກການລະເມີດສັນຍາການ ດຳເນີນທຸລະກິດກັບຄູ່ກໍລະນີທີ່ໄດ້ຍື່ນຄຳຮ້ອງຂໍ ແລະ ຄຽງຄູ່ກັບການແກ້ຄຳຮ້ອງຂໍນັ້ນ ຄູ່ກໍລະນີຝ່າຍຖືກຮ້ອງຂໍກໍສາມາດຍື່ນຄຳຮ້ອງຂໍແຍ່ງ ໃນກໍລະນີທີ່ເຫັນວ່າຝ່າຍທີ່ຮ້ອງຂໍຍັງມີພັນທະທີ່ຕ້ອງປະຕິບັດຕໍ່ຕົນ ເພື່ອຮ້ອງຂໍແຍ່ງໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂໄປພ້ອມກັນ.

ພາຍຫຼັງຜູ້ຖືກຮ້ອງຂໍ ໄດ້ຮັບຄຳຮ້ອງຂໍພ້ອມເອກະສານທີ່ກ່ຽວຂ້ອງແລ້ວ ແມ່ນໃຫ້ສົ່ງຄຳແກ້ຄຳຮ້ອງຂໍ ພາຍໃນສິບຫ້າວັນ ເນື້ອໃນຄຳແກ້ຄຳຮ້ອງຂໍນັ້ນ ແມ່ນສະແດງເຖິງການຮັບຮູ້ ຫຼື ປະຕິເສດ ຫຼື ຮ້ອງຂໍແຍ່ງຕໍ່ຄຳຮ້ອງຂໍ ຕາມເນື້ອໃນ

ທີ່ໄດ້ກໍານົດໄວ້ ໃນມາດຕາ 18 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ບ່ອນຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງ ຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
- ບັນຫາທີ່ເກີດຂໍ້ຂັດແຍ່ງ;
- ມູນຄ່າຂອງຂໍ້ຂັດແຍ່ງ;
- ຂໍ້ສະເໜີຂອງຄູ່ກໍລະນີ.

ສະນັ້ນ, ເມື່ອໄດ້ຮັບຄໍາແກ້ຄໍາຮ້ອງຂໍແລ້ວ ພະແນກ ຫຼື ໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ນອກຈາກຈະກວດກາເບື້ອງຕົ້ນຕໍ່ຄໍາແກ້ຄໍາຮ້ອງຂໍ ແລະ ເອກະສານທີ່ປະກອບດັ່ງກ່າວແລ້ວ ຍັງມີໜ້າທີ່ປະກອບເປັນ ສໍານວນຄໍາແກ້ຄໍາຮ້ອງຂໍສະເພາະ ເພື່ອສະເໜີຕໍ່ຫົວໜ້າສູນ ຫຼື ຫົວໜ້າຫ້ອງການແກ້ໄຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາ ດັ່ງນີ້:

1) ມອບສໍານວນຄໍາແກ້ຄໍາຮ້ອງຂໍໃຫ້ພະແນກ ຫຼື ໜ່ວຍງານຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດ ຖະ ກິດ ຄົ້ນຄ້ວາເບື້ອງຕົ້ນ ເພື່ອເຊີນຄູ່ກໍລະນີທີ່ຍື່ນຄໍາແກ້ຄໍາຮ້ອງເຂົ້າມາຮັບຊາບ ພ້ອມທັງປຶກສາຫາລື, ເອກະ ພາບ ແລະ ຕົກລົງກ່ຽວກັບການເລືອກຮູບການ, ເລືອກກໍາມະການແກ້ໄຂ. ໃນກໍລະນີມີຄວາມເປັນເອກະ ພາບກ່ຽວກັບຮູບການ ແລະ ກໍາມະການແກ້ໄຂແລ້ວ ກໍສາມາດນໍາເອົາຂໍ້ຂັດແຍ່ງດັ່ງກ່າວ ມາດໍາເນີນການ ແກ້ໄຂຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມກົດໝາຍ ແລະ ລະບຽບການ ທີ່ກໍາ ນົດໄວ້.
2) ມອບສໍານວນຄໍາແກ້ຄໍາຮ້ອງຂໍຄືນໃຫ້ພະແນກ ຫຼື ໜ່ວຍງານຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ເພື່ອແຈ້ງໃຫ້ຄູ່ກໍລະນີທີ່ຍື່ນຄໍາແກ້ຄໍາຮ້ອງຂໍເຂົ້າມາປັບປຸງເນື້ອໃນຄໍາແກ້ຄໍາຮ້ອງຂໍ ໃນ ກໍລະນີຄໍາແກ້ຄໍາຮ້ອງຂໍນັ້ນ ຫາກມີເນື້ອໃນບໍ່ທັນຄົບຖ້ວນ ຫຼື ສະເໜີໃຫ້ນໍາເອົາຂໍ້ມູນຫຼັກຖານທີ່ຈໍາເປັນມາ ປະກອບເຂົ້າໃນສໍານວນຄໍາແກ້ຄໍາຮ້ອງຂໍ ລວມທັງການອະທິບາຍຕໍ່ບັນຫາທີ່ຍັງບໍ່ທັນກະຈ່າງແຈ້ງ.

## 2. ທັກສະການແນະນໍາຄູ່ກໍລະນີໃນການເລືອກ, ການແຕ່ງຕັ້ງຜູ້ຕັດສິນ ແລະ ຄະນະກໍາມະການຕັດສິນ

ການແກ້ໄຂຂໍ້ຂັດແຍ່ງດ້ວຍຮູບການຕັດສິນ ຄູ່ກໍລະນີມີສິດເລືອກເອົາຜູ້ຕັດສິນໜຶ່ງ ຫຼື ສາມຄົນ ຈາກປຶ້ມ ບັນຊີລາຍຊື່ຜູ້ຕັດສິນ ພາຍໃນ ສິບຫ້າວັນ. ຖ້າຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ທັງສອງຝ່າຍຫາກເລືອກບໍ່ໄດ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນ ຫ້າວັນລັດຖະການ ພ້ອມທັງແຈ້ງໃຫ້ຄູ່ ກໍລະນີໄດ້ຮັບຊາບ.

ໃນພາກປະຕິບັດ ການເລືອກຜູ້ຕັດສີນ ແລະ ຄະນະກຳມະການຕັດສີນ ແມ່ນມີສອງວິທີຄື: ການເລືອກຜູ້ຕັດສີນ ແລະ ຄະນະກຳມະການຕັດສີນ ໂດຍຄູ່ກໍລະນີໄດ້ຕົກລົງກັນໄວ້ໃນສັນຍາ ແລະ ຄູ່ກໍລະນີບໍ່ໄດ້ຕົກລົງ ຫຼື ບໍ່ໄດ້ກຳນົດໄວ້ໃນສັນຍາ.

ກໍລະນີທີ່ຄູ່ກໍລະນີທັງສອງຝ່າຍຫາກໄດ້ຕົກລົງເປັນເອກະພາບກັນທີ່ກຳນົດໄວ້ໃນສັນຍາວ່າ: ຖ້າການດຳເນີນທຸລະກິດຂອງພວກຕົນຫາກມີບັນຫາຂໍ້ຂັດແຍ່ງເກີດຂຶ້ນຈະນຳໃຊ້ການແກ້ໄຂຂໍ້ຂັດແຍ່ງຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ໃນນີ້ ຄູ່ກໍລະນີໄດ້ຕົກລົງ ແລະ ກຳນົດກ່ຽວກັບການເລືອກຮູບການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສີນ ແລະ ໄດ້ເລືອກເອົາຈຳນວນຜູ້ຕັດສີນ ຫຼື ບາງກໍລະນີ ຄູ່ກໍລະນີໄດ້ບົ່ງຊື່ຜູ້ຕັດສີນໄວ້ໃນສັນຍາແລ້ວ. ສະນັ້ນ, ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນຄູ່ກໍລະນີໄດ້ເຂົ້າມາສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແຈ້ງຈຸດປະສົງທີ່ພວກຕົນໄດ້ຕົກລົງເປັນເອກະພາບກັນນັ້ນຕໍ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ໃນກໍລະນີດັ່ງກ່າວສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະຕ້ອງໄດ້ຖາມຄູ່ກໍລະນີຄືນກ່ຽວກັບການເລືອກຮູບການແກ້ໄຂ, ການເລືອກເອົາຈຳນວນຜູ້ຕັດສີນ ແລະ ຜູ້ຕັດສີນທີ່ຄູ່ກໍລະນີໄດ້ບົ່ງຊື່ໄວ້ໃຫ້ເປັນກຳມະການຕັດສີນນັ້ນຄືນ, ຖ້າຫາກຄູ່ກໍລະນີໄດ້ຢືນຢັນເອົາຕາມການຕົກລົງໄວ້ໃນສັນຍາແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະປະຕິບັດຕາມເຈດຈຳນົງຂອງຄູ່ກໍລະນີ ແລະ ຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນສັນຍາ ໂດຍສະເໜີໃຫ້ຄູ່ກໍລະນີເຂົ້າມາປະກອບເອກະສານຕາມແບບພິມທີ່ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ ໄດ້ກຳນົດໄວ້. ຈາກນັ້ນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະປະສານຫາຜູ້ຕັດສີນ ແລະ ຄະນະກຳມະການຕັດສີນ ເພື່ອດຳເນີນການແກ້ໄຂຕາມຂັ້ນຕອນການດຳເນີນການຕັດສີນ.

ກໍລະນີຄູ່ກໍລະນີທັງສອງຝ່າຍຫາກບໍ່ເປັນເອກະພາບກັນກ່ຽວກັບການເລືອກ ຈຳນວນກຳມະການຕັດສີນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະຕ້ອງໄດ້ອອກໝາຍເຊີນໃຫ້ຄູ່ກໍລະນີເຂົ້າມາເພື່ອປຶກສາຫາລືໃຫ້ມີຄວາມເປັນເອກະພາບຕໍ່ກັບການເລືອກຈຳນວນກຳມະການຕັດສີນ ເພື່ອດຳເນີນການຕັດສີນ ຊຶ່ງໃນພາກປະຕິບັດກໍໄດ້ປາກົດມີກໍລະນີທີ່ທັງສອງຝ່າຍໄດ້ເລືອກເອົາຈຳນວນກຳມະການຕັດສີນບໍ່ກົງກັນ ຫຼື ບໍ່ເປັນເອກະພາບກັນ ເຊັ່ນ: ຝ່າຍໜຶ່ງເລືອກເອົາຈຳນວນຜູ້ຕັດສີນໜຶ່ງຄົນ ແຕ່ອີກຝ່າຍໜຶ່ງເລືອກເອົາຄະນະກຳມະການຕັດສີນສາມຄົນ. ສະນັ້ນ, ໃນກໍລະນີດັ່ງກ່າວນີ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ອອກໝາຍເຊີນຫຼາຍຄັ້ງ ເພື່ອໃຫ້ຄູ່ກໍລະນີເຂົ້າມາຕົກລົງເປັນເອກະພາບກັນ. ແຕ່ຜ່ານການອອກໝາຍເຊີນຫຼາຍຄັ້ງ ຖ້າຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ທັງສອງຝ່າຍຫາກບໍ່ເຂົ້າມາຕາມໝາຍເຊີນໂດຍບໍ່ມີເຫດຜົນພຽງພໍ ຫຼື ຄູ່ກໍລະນີໄດ້ເຂົ້າມາຕາມໝາຍເຊີນແລ້ວ ຜ່ານການປຶກສາຫາລືຄູ່ກໍລະນີກໍຍັງບໍ່ສາມາດຕົກລົງກ່ຽວກັບຈຳນວນກຳມະການຕັດສີນສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍຈະບໍ່ສາມາດດຳເນີນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວໄດ້ ແລະ ຈະສົ່ງສຳນວນຄຳຮ້ອງຂໍ ແລະ ຄຳແກ້ຄຳຮ້ອງຂໍ ພ້ອມທັງເອກະສານຕ່າງໆ ທີ່ປະກອບມານັ້ນຄືນໃຫ້ຄູ່ກໍລະນີ.

ໃນກໍລະນີທີ່ຄູ່ກໍລະນີທັງສອງຝ່າຍໄດ້ເຫັນດີເປັນເອກະພາບຕໍ່ກັບ ຈຳນວນກຳມະການຕັດສີນແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍຈະອອກຂໍ້ຕົກລົງຮັບເອົາສຳນວນຄຳຮ້ອງຂໍມາພິຈາລະນາແກ້ໄຂພ້ອມທັງຂຶ້ນເລກທີ່ເປັນສຳນວນຂໍ້ຂັດແຍ່ງ.

ໃນການດຳເນີນການຕັດສິນຄູ່ກໍລະນີມີສິດເລືອກເອົາຜູ້ຕັດສິນໜຶ່ງ ຫຼື ສາມຄົນ ຂອງບັນຊີລາຍຊື່ຜູ້ຕັດສິນ ທີ່ກຳນົດໄວ້ໃນກົດໝາຍ ຊຶ່ງການເລືອກຜູ້ຕັດສິນມີວິທີປະຕິບັດດັ່ງນີ້[1]:

### 2.1 ກໍລະນີເລືອກເອົາຜູ້ຕັດສິນໜຶ່ງຄົນ

ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະໃຫ້ຄູ່ກໍລະນີຕົກລົງເປັນເອກະພາບກັນເລືອກເອົາຜູ້ຕັດສິນໜຶ່ງຄົນຈາກປຶ້ມບັນຊີລາຍຊື່ຜູ້ຕັດສິນ ພາຍຫຼັງທີ່ຄູ່ກໍລະນີເລືອກໄດ້ແລ້ວຕ້ອງເຮັດໜັງສືສະເໜີພ້ອມທັງສົ່ງລາຍຊື່ຜູ້ຕັດສິນທີ່ພວກຕົນເຫັນດີເປັນເອກະພາບນັ້ນໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນສິບຫ້າວັນ ນັບແຕ່ວັນທີ່ໄດ້ຕົກລົງເຫັນດີເປັນເອກະພາບໃຫ້ແກ້ໄຂຂໍ້ຂັດແຍ່ງດ້ວຍຮູບການຕັດສິນເປັນຕົ້ນໄປ ເພື່ອໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແຕ່ງຕັ້ງເປັນຜູ້ຕັດສິນໃນຂັ້ນຕໍ່ໄປ. ຖ້າຄູ່ກໍລະນີຝ່າຍໃດຝ່າຍໜຶ່ງຫາກເລືອກບໍ່ໄດ້, ບໍ່ເລືອກ ຫຼື ເລືອກບໍ່ທັນຕາມກຳນົດເວລາ ສູນ ຫຼື ຫ້ອງ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນຫ້າວັນລັດຖະການ ພ້ອມທັງແຈ້ງໃຫ້ຄູ່ກໍລະນີຮັບຊາບ.

**ຕົວຢ່າງ:** ຝ່າຍຮ້ອງຂໍ(ກ) ແລະ ຝ່າຍຖືກຮ້ອງຂໍ (ຂ) ໄດ້ເລືອກເອົາຜູ້ຕັດສິນໜຶ່ງຄົນຕາມປຶ້ມບັນຊີລາຍຊື່ຜູ້ຕັດສິນຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເຊິ່ງຜ່ານການເລືອກແລ້ວໄດ້ຕົກລົງເຫັນດີເອົາຜູ້ຕັດສິນຊື່ ທ້າວ ງ ເພື່ອມາເປັນຜູ້ຕັດສິນຂໍ້ຂັດແຍ່ງໃຫ້ກັບພວກຕົນ.

### 2.2 ກໍລະນີເລືອກເອົາຜູ້ຕັດສິນສາມຄົນ

ເມື່ອຄູ່ກໍລະນີຕົກລົງເຫັນດີເປັນເອກະພາບເລືອກເອົາຜູ້ຕັດສິນຈຳນວນສາມຄົນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະໃຫ້ຄູ່ກໍລະນີແຕ່ລະຝ່າຍເລືອກເອົາຜູ້ຕັດສິນໜຶ່ງຄົນ ເພື່ອປະກອບເປັນຄະນະກຳມະການຕັດສິນ ຈາກປຶ້ມບັນຊີລາຍຊື່ກຳມະການຕັດສິນຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນເວລາສິບຫ້າວັນ. ຖ້າຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ທັງສອງຝ່າຍເລືອກບໍ່ໄດ້, ບໍ່ເລືອກ ຫຼື ເລືອກບໍ່ທັນຕາມກຳນົດເວລາສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນເວລາຫ້າວັນລັດຖະການ ພ້ອມທັງແຈ້ງໃຫ້ຄູ່ກໍລະນີຮັບຊາບ. ຫຼັງຈາກນັ້ນໃຫ້ຜູ້ຕັດສິນສອງຄົນທີ່ຖືກເລືອກຈາກຄູ່ກໍລະນີນັ້ນເລືອກເອົາຜູ້ຕັດສິນຜູ້ທີ່ສາມມາເປັນປະທານຄະນະກຳມະການຕັດສິນ ພາຍໃນຫ້າວັນລັດຖະການ, ຖ້າຜູ້ຕັດສິນສອງຄົນຫາກເລືອກປະທານບໍ່ໄດ້ ຫຼື ບໍ່ເປັນເອກະພາບ ຫຼື ເລືອກບໍ່ທັນຕາມກຳນົດເວລາ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນຫ້າວັນລັດຖະການ ພ້ອມທັງແຈ້ງໃຫ້ຄູ່ກໍລະນີຮັບຊາບ.

**ຕົວຢ່າງ:** ຝ່າຍຮ້ອງຂໍ(ກ) ເລືອກຜູ້ຕັດສິນໜຶ່ງຄົນ ຊື່ ທ້າວ ວ ແລະ ຝ່າຍຖືກຮ້ອງຂໍ(ຂ) ກໍໄດ້ເລືອເອົາຜູ້ຕັດສິນອີກໜຶ່ງຄົນ ຊື່ ທ້າວ ທ ຕາມປຶ້ມບັນຊີລາຍຊື່ຜູ້ຕັດສິນຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເຊັ່ນກັນ ຫຼັງຈາກນັ້ນຜູ້ຕັດສິນທັງຄົນກໍເລືອກເອົາຜູ້ຕັດສິນຜູ້ທີສາມເພື່ອມາເປັນປະທານກຳມະການຕັດສິນຂໍ້ຂັດແຍ່ງຂອງພວກຕົນຕາມຂັ້ນຕອນຕໍ່ໄປ.

---

[1] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງເລກທີ່ 51/ສພຊ, ລົງວັນທີ22 ມິຖຸນາ 2018, ມາດ 65

## 2.3 ການແຕ່ງຕັ້ງຜູ້ຕັດສິນ ແລະ ຄະນະກຳມະການຕັດສິນ

ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຕ່ງຕັ້ງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ພາຍໃນຫ້າວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບລາຍຊື່ຜູ້ຕັດສິນ ຕາມການສະເໜີຂອງຄູ່ກໍລະນີ ຫຼື ຕາມການເລືອກຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ໃນພາກປະຕິບັດກ່ອນການແຕ່ງຕັ້ງຜູ້ຕັດສິນ ຫຼື ປະທານຄະນະກຳມະການຕັດສິນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະຕ້ອງໄດ້ຖາມເບິ່ງເຈດຈຳນົງຂອງເປົ້າໝາຍຜູ້ທີ່ຈະແຕ່ງຕັ້ງໃຫ້ເປັນຜູ້ຕັດສິນ, ຜູ້ເປັນປະທານຄະນະກຳມະການຕັດສິນນັ້ນກ່ອນວ່າຜູ້ກ່ຽວສາມາດຮັບເປັນປະທານຄະນະກຳມະການຕັດສິນຂໍ້ຂັດແຍ່ງດັ່ງກ່າວນັ້ນໄດ້ ຫຼື ບໍ່? ແລະ ຜູ້ກ່ຽວສາມາດຮັບເອົາຄ່າແຮງງານຕາມການສະເໜີຂອງຄູ່ກໍລະນີ ຫຼື ຕາມການສະເໜີຂອງຜູ້ຕັດສິນສອງຄົນທີ່ຖືກເລືອກຈາກຄູ່ກໍລະນີນັ້ນ ຫຼື ບໍ່? ຖ້າຜູ້ຕັດສິນ ແລະ ປະທານຄະນະກຳມະການຕັດສິນຕອບຮັບແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍຈະດຳເນີນການແຕ່ງຕັ້ງຜູ້ຕັດສິນ ແລະ ຄະນະກຳມະການຕັດສິນໄດ້, ແຕ່ກົງກັນຂ້າມຖ້າຜູ້ຕັດສິນ ຫຼື ປະທານຄະນະກຳມະການຕັດສິນ ບໍ່ຕົກລົງຮັບເອົາຄ່າແຮງງານນັ້ນ ກໍຖືວ່າເປົ້າໝາຍໄດ້ປະຕິເສດບໍ່ຮັບເປັນກຳມະການຕັດສິນ. ໃນພາກປະຕິບັດຕົວຈິງ ມີບາງກໍລະນີຜູ້ທີ່ເປັນເປົ້າໝາຍນັ້ນ ສາມາດປະຕິເສດບໍ່ຮັບເປັນກຳມະການຕັດສິນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1) ບໍ່ມີຄວາມໝັ້ນໃຈທາງດ້ານວິຊາສະເພາະໃດໜຶ່ງຂອງຕົນ;
2) ບໍ່ສາມາດຕົກລົງຮັບເອົາຄ່າແຮງງານກັບຄູ່ກໍລະນີ ຫຼື ຜູ້ຕັດສິນສອງຄົນທີ່ຖືກເລືອກຈາກຄູ່ກໍລະນີໄດ້;
3) ຖືກຊັບຊ້ອນໄປປະຕິບັດໜ້າທີ່ວຽກງານຢູ່ທ້ອງຖິ່ນອື່ນ ຫຼື ຢູ່ຕ່າງປະເທດ;
4) ເສຍຊີວິດກະທັນຫັນ.

ການປະຕິເສດເປັນຜູ້ຕັດສິນ ຫຼື ປະທານຄະນະກຳມະການຕັດສິນ ທີ່ໄດ້ກ່າວມາຂ້າງເທິງນີ້, ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຄູ່ກໍລະນີ, ຜູ້ຕັດສິນ ແລະ ຜູ້ຕັດສິນສອງຄົນທີ່ຖືກເລືອກຈາກຄູ່ກໍລະນີໄດ້ຮັບຊາບ ເພື່ອເຂົ້າສູ່ຂະບວນການເລືອກເອົາຜູ້ຕັດສິນ ຫຼື ປະທານຄະນະກຳມະການຕັດສິນຄືນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ 2018.

ພາຍຫຼັງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ແຕ່ງຕັ້ງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນແລ້ວ ຈະມອບສຳນວນຂໍ້ຂັດແຍ່ງໃຫ້ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ເພື່ອດຳເນີນການຕັດສິນຕາມກົດໝາຍ.

**References:**

1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 52/ສພຊ, ລົງວັນທີ 22/6/2018.

2. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, ປີ 2020.
3. ປື້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.